**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງໂຍທາທິການ ແລະ ຂົນສົ່ງ**

**ກົມຂົວທາງ**

ເລກທີ 17226 /ກຂທ

ນະຄອນຫຼວງວຽງຈັນ, ວັນທີ 23 ກໍລະກົດ 2025

**<u>ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ</u>**

**<u>ເຖິງ</u> : ບໍລິສັດ ຫ້າງຮ້ານຕ່າງໆ ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນ ການສະໜອງພາຫານະລົດກະບະ ຈໍານວນ 04 ຄັນ ໃຫ້ແກ່ໂຄງການປັບປຸງ ແລະ ສ້ອມແປງທາງ 13 ໃຕ້ (ກມ 21-71).**

- ອີງຕາມແຜນການຈັດຕັ້ງປະຕິບັດ ຂອງໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງ 13 ໃຕ້ ຊ່ວງ ນະຄອນຫຼວງວຽງຈັນ ຫາ ແຂວງບໍລິຄໍາໄຊ (ຊ່ວງ ກມ 21 - ກມ71) ລວງຍາວ 50 ກມ.
- ອີງໃສ່ ແຜນຈັດຊື້ພາຫານະ ຂອງໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງເລກທີ 13 ໃຕ້ ( ກມ 21-71) .

ກົມຂົວທາງ ຂໍຖືເປັນກຽດ ຂໍເຊີນບັນດາບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນສົມທຽບລາຄາ ເພື່ອສະໜອງພາຫານະລົດກະບະ ຈໍານວນ 04 ຄັນ ໃຫ້ແກ່ໂຄງການປັບປຸງ ແລະ ສ້ອມແປງທາງ 13 ໃຕ້ ແຕ່ນະຄອນຫຼວງວຽງຈັນ ຫາ ແຂວງບໍລິຄໍາໄຊ (ກມ 21-71) ໂດຍນໍາໃຊ້ ບ້ວງເງິນບໍລິຫານໂຄງການ ແຫຼ່ງທຶນກູ້ຢືມຈາກທະນາຄານລົງທຶນໂຄງລ່າງພື້ນຖານອາຊີ (AIIB ) ສປ ຈີນ.

ສະນັ້ນ ຈຶ່ງຂໍເຊີນບັນດາບໍລິສັດ ຫ້າງຮ້ານຕ່າງໆ ທີ່ມີຄວາມສົນໃຈ ເຂົ້າຮ່ວມແຂ່ງຂັນປະມູນສົມທຽບລາຄາ ໃນການຈັດຊື້ພາຫານະລົດກະບະ, ລາຍລະອຽດດັ່ງນີ້:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈໍານວນ |
|---|---|---|---|
| 1 | ລົດກະບະ 4 ປະຕູ , ສີ ຂາວ , ຈັກ 2.000 ຫາ 2.800 ຊີຊີ, 4X4 ມີໄຟວິນ 110-190 ແຮງມ້າຂຶ້ນ, 400-450 ແຮງບິດ, ມີແອ, ມີກ້ອງຖອຍ ພວງມະໄລໄຟຟ້າ ຫຼື ພາວເວີ, ມີຖົງລົມນິລະໄພ :<br>- ລະບົບເກຍ ກະປຸກ 3 ຄັນ ແລະ<br>- ລະບົບເກັຍ ໂອໂຕ 1 ຄັນ. | ຄັນ | 4 ຄັນ |
| | ລວມ | | 4 ຄັນ |

Scanned with CamScanner

**ເງື່ອນໄຂ ການປະມູນ** :

1. ການປະມູນຈະດຳເນີນຕາມຮູບແບບ ແລະ ຂັ້ນຕອນການປະມູນຈັດຊື້-ຈັດຈ້າງ ຕາມເອກະສານ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
2. ການປະມູນນີ້ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີໃບອະນຸຍາດດຳເນີນທຸລະກິດການຄ້າ-ຂາຍລົດຖືກຕ້ອງຕາມກົດໝາຍເຂົ້າຮ່ວມ, ເອກະສານການປະມູນ ສາມາດພິມພັນນຳໂຄງການປັບປຸງ ແລະ ສ້ອມແປງທາງເລກທີ 13 ໃຕ້ ແຕ່ນະຄອນຫຼວງວຽງຈັນ ຫາ ແຂວງບໍລິຄຳໄຊ (ກມ 21 ຫາ ກມ 71), ເລີ່ມແຕ່ວັນທີ 28 ກໍລະກົດ ຫາ 26 ສິງຫາ 2025 (ກຳນົດ 30ວັນ) ສອບຖາມຂໍ້ມູນເພີ່ມເຕີມໄດ້ ເບີໂທລະສັບ 020 59 624 747 ແລະ 020 55 428 956 ໃນໂມງລັດຖະການ;
3. ລາຄາທີ່ສະເໜີ ຕ້ອງເປັນເງິນກີບ, ໃນນັ້ນລວມມີຄ່າ : ພາສີ ອາກອນ ແລະ ຂຶ້ນທະບຽນ ຂຶ້ນປ້າຍເປັນລົດຂອງລັດ (ໂຄງການປັບປຸງ ແລະ ສ້ອມແປງທາງ 13 ໃຕ້ ແຕ່ນະຄອນຫຼວງວຽງຈັນ ຫາ ແຂວງບໍລິຄຳໄຊ ( ກມ 21 ຫາ ກມ 71);
4. ໃຫ້ບອກລະອຽດວ່າ ລົດມີແລ້ວ ຫຼື ຈະສັ່ງເຂົ້າມາໃໝ່ ຕ້ອງກຳນົດເວລາຊັດເຈນ ໃນການສົ່ງລົດໃຫ້ຊາບນຳ;
5. ການສົ່ງເອກະສານ ປະມູນ ແມ່ນວັນທີ່ 26/8/2025, ຈະຕ້ອງສົ່ງກ່ອນ ເວລາ 14 : 00 ໂມງ ແລະ ເລີ່ມດຳເນີນກອງປະຊຸມເປີດຊອງປະມູນການຈັດຊື້ ເວລາ 14 : 10 ໂມງ ຂອງວັນທີ່ 26/8/2025 , ທີ່ຫ້ອງປະຊຸມຊັ້ນ 2 ຂອງກົມຂົວທາງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ໂດຍຊ້ອງໜ້າຄະນະກຳມະການປະມູນ.

ດັ່ງນັ້ນ, ຫວັງວ່າບັນດາ ບໍລິສັດ ຫ້າງຮ້ານ ຈະໃຫ້ການຮ່ວມມື ແລະ ເຂົ້າຮ່ວມການປະມູນນຳພວກເຮົາດ້ວຍ.

ຮອງຫົວໜ້າກົມ

ກະຊວງໂຍທາທິການ ແລະ ຂົນສົ່ງ ກົມຂົວທາງ

ສີສຸພັນ ຈັນສະຫວັດ